ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------===000===----------

ກະຊວງການເງິນ

ເລກທີ: 0236/ກງ

ນະຄອນຫລວງວຽງຈັນ, ວັນທີ: 26 JAN 2017

# ແຈ້ງການ

ເຖິງ : - ກົມພາສີ, ກະຊວງການເງິນ.

- ບັນດາດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ.

ເລື່ອງ : ໃຫ້ຢຸດຕິການອະນຸຍາດນໍາເຂົ້າເພື່ອສົ່ງອອກສໍາລັບສິນຄ້າປະເພດພາຫະນະ, ນໍ້າມັນເຊື້ອໄຟ ແລະ ນໍ້າມັນເຊື້ອໄຟຜ່ານແດນ ຢ່າງຊົ້ມເຊີງ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ສະບັບປັບປຸງບາງມາດຕາ ເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມ ຂໍ້ຕົກລົງຂອງ ລັດຖະມົນຕີກະຊວງການເງິນ ສະບັບເລກທີ 0462/ກງ, ລົງວັນທີ 14/03/2003 ວ່າດ້ວຍການເກັບຄ່າທໍານຽມເດີດຖານ ສໍາລັບບາງສິນຄ້າ, ເຄື່ອງຂອງ ນໍາເຂົ້າເພື່ອສົ່ງອອກຕໍ່.
- ອີງຕາມແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 140/ຫສນຍ.ກລຂ, ລົງວັນທີ 25 ມັງກອນ 2017.

ເພື່ອຮັບປະກັນການເກັບລາຍຮັບພາສີ-ອາກອນເຂົ້າງົບປະມານແຫ່ງລັດ ແລະ ການຄຸ້ມຄອງການນາເຂົ້າສິນຄ້າຍຸດທະສາດປະເພດພາຫະນະ ແລະ ນໍ້າມັນເຊື້ອໄຟ ໃຫ້ມີຄວາມຮັດກຸມ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

## ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ອອກແຈ້ງການ:

1. ໃຫ້ກົມພາສີຢຸດຕິການອະນຸຍາດນໍາເຂົ້າເພື່ອສົ່ງອອກສໍາລັບສິນຄ້າປະເພດພາຫະນະ, ນໍ້າມັນເຊື້ອໄຟ ຕາມທີ່ກໍານົດໄວ້ໃນຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 0462/ກງ, ລົງວັນທີ 14/03/2003 ແລະ ແຈ້ງການສະບັບເລກທີ 4485/ກງ, ລົງວັນທີ 23/12/2016.
2. ໃຫ້ບໍລິສັດ ແວວເອັສ ການຄ້າຂາອອກ-ຂາເຂົ້າ ຈໍາກັດ, ບໍລິສັດ ສີຈັນທອງທິບ ການຄ້າຂາອອກ-ຂາເຂົ້າ ແລະ ບໍລິສັດ ອື່ນໆ ຢຸດຕິການນໍາເຂົ້ານໍ້າມັນເຊື້ອໄຟເພື່ອສົ່ງອອກທີ່ໄດ້ອະນຸມັດຜ່ານມາ. ໃຫ້ບໍລິສັດ ຂົນສົ່ງສາກົນ ຈໍາກັດ ແລະ ບໍລິສັດ ອື່ນໆ ຢຸດຕິການດໍາເນີນທຸລະກິດນໍາເຂົ້ານໍ້າມັນເຊື້ອໄຟ ເພື່ອເຮັດບໍລິການຜ່ານແດນຜ່ານມາ.

ສ່ວນລະບຽບການຄຸ້ມຄອງນ້ຳມັນເຊື້ອໄຟຜ່ານແດນຕາມລະບຽບການຜ່ານແດນສາກົນ ກະຊວງການເງິນ ຈະສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອປັບປຸງໃຫ້ຖືກຕ້ອງ ຕາມລະບຽບການສາກົນ.

3. ສຳລັບນ້ຳມັນເຊື້ອໄຟທີ່ຕັ້ງໄປະຂາຍຕາມລຳແມ່ນ້ຳຂອງ ມອບໃຫ້ຂະແໜງພາສີ ສົມທົບກັບຂະແໜງສ່ວຍສາອາກອນ, ອຸດສາຫະກຳ-ການຄ້າ ແລະ ພາກສ່ວນກ່ຽວຂ້ອງ ດຳເນີນການກວດກາມາດຖານເຕັກນິກໃນການດຳເນີນທຸລະກິດ ຖ້າມີຊ່ອງຫວ່າງການຫຼົບຫຼີກໜີພາສີ-ອາກອນ ແມ່ນໃຫ້ຍົກເລີກ.

4. ການນຳເຂົ້າສິນຄ້າປະເພດພາຫະນະ ແລະ ນ້ຳມັນເຊື້ອໄຟ ຕ້ອງນຳເຂົ້າ ແລະ ແຈ້ງເສຍພາສີ-ອາກອນ ຜ່ານດ່ານພາສີສາກົນເທົ່ານັ້ນ, ຫ້າມນຳເຂົ້າຜ່ານດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີຢ່າງເດັດຂາດ.

5. ໃຫ້ກົມພາສີປະສານສົມທົບກັບຂະແໜງການກ່ຽວຂ້ອງ ໂຄສະນາເຜີຍແຜ່ ແລະ ເອົາໃຈໃສ່ ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

6. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ທຸກຂໍ້ກຳນົດ, ລະບຽບການທີ່ຂັດກັບແຈ້ງການສະບັບນີ້ລ້ວນແຕ່ຖືກຍົກເລີກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ພ້ອມກັບຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຮອງນາຍົກລັດຖະມົນຕີ,**
**ລັດຖະມົນຕີກະຊວງການເງິນ**

ສົມດີ ດວງດີ

<u>ບ່ອນສົ່ງ</u>:

| | |
|---|---|
| - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 01 ສະບັບ |
| - ກະຊວງອຸດສະຫະກຳ ແລະ ການຄ້າ | 01 ສະບັບ |
| - ຫ້ອງວ່າການປົກຄອງແຂວງ, ແຂວງລະ | 01 ສະບັບ |
| - ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ | 01 ສະບັບ |
| - ເກັບມ້ຽນສຳເນົາ | 01 ສະບັບ |